ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ ນະໂຍບາຍພະລັງງານແກ່ຂະແໜງທະນາຄານ




ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ກົມນະໂຍບາຍ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ຈັດຕັ້ງການເຜີຍແຜ່ນະໂຍບາຍພະລັງງານຂອງ ສປປ ລາວ ໃຫ້ແກ່ພະນັກງານໃນຂະແໜງການທະນາຄານ ໃນວັນທີ 22 ກັນຍາ 2020 ທີ່ສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານ ໄຊລືຊາ ຜູຍຍະວົງ ວ່າການຫົວໜ້າກົມນິຕິກຳ ແລະ ທ່ານ ສັນຍາ ສິມວິຈິດ ຮອງຫົວໜ້າກົມນະໂຍບາຍ; ມີບັນດາຄະນະກົມ, ພະນັກງານຈາກທະນາຄານແຫ່ງ ສປປ ລາວ-ທະນາຄານທຸລະກິດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ ໄດ້ເປັນການເຜີຍແຜ່ນະໂຍບາຍພະລັງງານຂອງ ສປປ ລາວ ທີ່ຮັບຮອງ ແລະ ປະກາດໃຊ້ຢ່າງເປັນ ທາງການ ຈາກດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍ ພະລັງງານຂອງ ສປປ ລາວ ເລກທີ 392/ລບ ລົງວັນທີ 08 ກໍລະກົດ 2020 ແນໃສ່ສ້າງຄວາມເຂົ້າໃຈອັນເລິກເຊິ່ງ ໃຫ້ພະນັກງານໃນຂະແໜງທະນາຄານ ເພື່ອເປັນບ່ອນອີງໃຫ້ແກ່ການ ພັດທະນາຂະແໜງການຕາມແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ເປັນການສະໜັບສະໜູນວິໄສທັດ ແລະ ແຜນຍຸດທະສາດ ແຫ່ງຊາດ. ນອກຈາກນີ້ ຍັງສະໜັບສະໜູນການຈັດຕັ້ງປະຕິບັດບັນດາເອກະສານ ທີ່ສຳຄັນຂອງກະຊວງພະລັງງານ ແລະ ບໍ່ແຮ່ ໃນນີ້ມີວິໄສທັດ ປີ 2030, ຍຸດທະສາດການພັດທະນາ 2025 ແລະ ແຜນພັດທະນາພະລັງງານ-ບໍ່ແຮ່ 5 ປີ ຄັ້ງທີ 8 (2016-2020) ແລະ ຍັງສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ (Sustainable Development Goals: SDG), ດ້ວຍການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ຢ່າງປະຢັດ, ມີປະສິດທິພາບ , ປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ, ນຳໃຊ້ເຕັກໂນໂລຊີທັນສະໄໝ, ສະອາດ ແລະ ເປັນມິດກັບສິ່ງແວດລ້ອມ.

ພະລັງງານ ຂອງ ສປປ ລາວ ມີບົດບາດສຳຄັນຫຼາຍຕໍ່ການພັດທະນາປະເທດຊາດ ໂດຍສະເພາະພະລັງງານໄຟຟ້າ ຊຶ່ງໃນນີ້ ສປປ ລາວ ກໍມີທ່າແຮງໃນການຜະລິດໄຟຟ້າຈາກພະລັງງານ, ພະລັງງານຄວາມຮ້ອນຈາກຖ່ານຫີນ ແລະ ພະລັງງານທົດແທນ ອື່ນໆ, ອຸດສາຫະກຳດ້ານພະລັງງານນີ້ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງດ້ານເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວ, ຊຸກຍູ້ການຜະລິດກະສິກຳ, ອຸດສາຫະກຳ ແລະ ຂະແໜງອື່ນ, ການຄ້າ-ການບໍລິການ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນທົ່ວປະເທດ. ພ້ອມນີ້ ພະລັງງານໄຟຟ້າຍັງເປັນສິນຄ້າສົ່ງອອກທີ່ສຳຄັນຂອງ ສປປ ລາວ ເພື່ອນຳລາຍໄດ້ທີ່ເປັນເງິນຕາຕ່າງປະເທດ ເຂົ້າມາ ສປປ ລາວ ປະກອບສ່ວນອັນສຳຄັນໃນການຮັກສາຄ່າຂອງເງິນຕາພາຍໃນໆແຕ່ລະປີທີ່ແນ່ນອນ.

ເພື່ອເຮັດໃຫ້ມີຄວາມເຂົ້າໃຈນະໂຍບາຍພະລັງງານ ຂອງ ສປປ ລາວ ແລະ ຖືກຈັດຕັ້ງປະຕິບັດໄປໃນລວງທີ່ຖືກຕ້ອງ, ເປັນເອກະພາບ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ສົມທົບກັນຈັດກອງປະຊຸມເຜີຍແຜ່ເນື້ອໃນຈິດໃຈບົດບັນຍັດໃນນະໂຍບາຍດັ່ງກ່າວ ໃຫ້ພະນັກງານຂະແໜງການທະນາຄານ ໄດ້ມີການຮັບຮູ້ ແລະ ເຂົ້າໃຈຢ່າງລະອຽດ ຊຶ່ງມີຫຼາຍອັນໄດ້ຕິດພັນກັບນະໂຍບາຍເງິນຕາ ກໍ່ຄືຂະແໜງການທະນາຄານ ໂດຍສະເພາະກັບທະນາຄານ ແຫ່ງ ສປປ ລາວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**